ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 0837/ກປ

ນະຄອນຫຼວງວຽງຈັນ, ວັນທີ 06/04/18

# ຂໍ້ຕົກລົງ

## ວ່າດ້ວຍມາດຕະຖານຄອບຄົວກະສິກຳ ແລະ ປ່າໄມ້ ຕົວແບບ, ບ້ານແບບຢ່າງດ້ານກະສິກຳ ແລະ ປ່າໄມ້ ແລະ ເມືອງກະສິກຳ ແລະ ປ່າໄມ້ ພັດທະນາ

- ອີງຕາມ ດຳລັດຂອງລັດຖະບານ ສະບັບເລກທີ 348/ລບ, ລົງວັນທີ 16 ພະຈິກ 2017, ວ່າດ້ວຍມາດຕະຖານພື້ນທຸກ ແລະ ມາດຕະຖານພັດທະນາ.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 99/ນຍ, ລົງວັນທີ 9 ມີນາ 2017, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້.
- ອີງຕາມ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດ ດຳລັດວ່າດ້ວຍມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາສະບັບເລກທີ 0830/ກປ, ລົງວັນທີ 06 ເມສາ 2018.
- ອີງຕາມ ການຄົ້ນຄວ້ານຳສະເໜີຂອງຫ້ອງການກະຊວງ ກະສິກຳ ແລະ ປ່າໄມ້ ລົງວັນທີ 06 ເມສາ 2018.

## ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ແມ່ນການຜັນຂະຫຍາຍ ເນື້ອໃນມາດຕະຖານລວມຂອງດຳລັດ 348/ລບ, ລົງວັນທີ 16 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດ ດຳລັດວ່າດ້ວຍມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ ມາກຳນົດເປັນມາດຕະຖານ ຄອບຄົວກະສິກຳ ແລະ ປ່າໄມ້ຕົວແບບ, ບ້ານແບບຢ່າງດ້ານກະສິກຳ ແລະ ປ່າໄມ້ ແລະ ເມືອງກະສິກຳ ແລະ ປ່າໄມ້ ພັດທະນາ; ເພື່ອເປັນບ່ອນອີງໃຫ້ແກ່ຂະແໜງການກະສິກຳ ແລະ ປ່າໄມ້ ນຳໄປຈັດຕັ້ງປະຕິບັດຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ.

**ມາດຕາ 2 ຄອບຄົວຕົວແບບ ທາງດ້ານກະສິກຳ ແລະ ປ່າໄມ້**

ຄອບຄົວຕົວແບບ ທາງດ້ານກະສິກຳ ແລະ ປ່າໄມ້ ຕ້ອງບັນລຸມາດຕະຖານ ດັ່ງນີ້:

1. ຕ້ອງຕັ້ງເຮືອນຢູ່ໃນບ້ານແບບຄົງທີ່ຕາມຜັງບ້ານທີ່ໄດ້ກຳນົດໄວ້ ດິນທຸກຕອນຂອງຄອບຄົວ ຫຼື ສະມາຊິກໃນຄອບຄົວຕ້ອງມີສຳມະໂນຕາດິນ ຫຼື ມີໃບຢັ້ງຢືນສິດນຳໃຊ້ທີ່ດິນ, ຖ້າແມ່ນສວນປູກໄມ້ກໍຕ້ອງຈົດທະບຽນສວນປູກ, ດິນທຸກຕອນທີ່ນຳໃຊ້ເຂົ້າໃນການຜະລິດ, ການບໍລິການຕ້ອງມີການຢັ້ງຢືນການນຳໃຊ້ຢ່າງຈະແຈ້ງ, ຖືກຕ້ອງ ແລະ ປະຕິບັດລະບຽບການຄຸ້ມຄອງນຳໃຊ້ທີ່ດິນ ຕາມແຜນຜັງນຳໃຊ້ທີ່ດິນຂອງບ້ານ.
2. ມີສິ່ງປຸກສ້າງທີ່ຕິດພັນກັບເຮືອນ ເຊັ່ນ: ເຮືອນຄົວ, ວິດຖ່າຍ, ຄອກສັດ, ພືດສວນຄົວ, ສວນໄມ້ໃຫ້ໝາກ... ໄດ້ຮັບການຈັດ ສັນໃຫ້ມີຄວາມສະອາດ, ປອດໄພ ແລະ ສະດວກໃຫ້ແກ່ການນຳໃຊ້;

3. ສາມາດນຳໃຊ້ແຫຼ່ງນ້ຳ ເຂົ້າໃນການຜະລິດກະສິກຳ ໄດ້ຕະຫລອດປີ;
4. ໄດ້ຮັບການຝຶກອົບຮົມດ້ານວິຊາອາຊີບ ທາງດ້ານກະສິກຳ ແລະ ປ່າໄມ້ໃດໜຶ່ງ; ຮູ້ຈັກນຳໃຊ້ເຕັກນິກວິຊາການທີ່ສາມາດຍົກສະມັດຕະພາບ ຂອງຜົນຜະລິດໃຫ້ສູງຂຶ້ນຢ່າງຕໍ່ເນື່ອງ;
5. ມີການຜະລິດກະສິກຳສະອາດ ແບບປະສົມປະສານ ແລະ ມີແບບແຜນການອະນຸລັກຮັກສາສະພາບແວດລ້ອມໃນລະດັບຄອບຄົວທີ່ດີ;
6. ເປັນຄອບຄົວທີ່ ເຂົ້າຮ່ວມໃນກຸ່ມການຜະລິດກະສິກຳ ແລະ ປ່າໄມ້, ຫຼື ກຸ່ມພັດທະນາອື່ນໆ ທີ່ອົງການປົກຄອງທ້ອງຖິ່ນສ້າງຕັ້ງຂຶ້ນ ຢ່າງຕັ້ງໜ້າ;
7. ຮູ້ສ້າງແຜນການຜະລິດ ຫຼືດຳເນີນທຸລະກິດທາງດ້ານກະສິກຳ ແລະ ປ່າໄມ້ ທີ່ມີກຳໄລຕໍ່ເນື່ອງ ຢ່າງນ້ອຍ 3 ປີຂຶ້ນໄປ;
8. ມີລາຍໄດ້ສະເລ່ຍ ສູງກ່ວາຄ່າສະເລ່ຍຂອງເຂດແຄວ້ນ ຫຼື ສູງກວ່າ 5,6 ຫາ 7,2 ລ້ານກີບ/ຄົນ/ປີ ຫຼື ປະມານ 700 ຫາ 900 ໂດລາ/ຄົນ/ປີ;
9. ມີບົດຮຽນ, ປະສົບການທີ່ດີ ແລະ ເປັນບ່ອນຮຽນຮູ້ໃຫ້ແກ່ຄອບຄົວຄົນອື່ນໄດ້.

**ມາດຕາ 3 ບ້ານແບບຢ່າງທາງດ້ານ ກະສິກຳ ແລະ ປ່າໄມ້**

ບ້ານແບບຢ່າງ ທາງດ້ານກະສິກຳ ແລະ ປ່າໄມ້ ຕ້ອງບັນລຸມາດຕະຖານ ດັ່ງນີ້:

1. ເປັນບ້ານທີ່ໄດ້ຮັບການຢັ້ງຢືນແຜນຜັງການພັດທະນາບ້ານທີ່ດີ, ມີລະບຽບການຄຸ້ມຄອງ ແລະ ນຳໃຊ້ແຜນຜັງການພັດທະນາບ້ານ, ມີການເຜີຍແຜ່ແນະນຳຢ່າງທົ່ວເຖິງ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ;
2. ມີລະບົບສະໜອງນ້ຳທີ່ດີ, ຖ້າເປັນຄອງເໝືອງ ກໍ່ນຳໃຊ້ວັດສະດຸທີ່ທົນທານເຊັ່ນ: ດິນ, ຫີນກໍ່, ດິນຈີ່, ເບຕົງ, ຫຼື ທໍ່ສິ່ງທີ່ມີຄວາມທົນທານ ແລະ ອື່ນໆຮັບປະກັນສະໜອງນ້ຳຮັບໃຊ້ການປູກຝັງ, ການລ້ຽງສັດ, ການລ້ຽງສັດນ້ຳ ແລະ ການຜະລິດອື່ນໆ ທີ່ບໍ່ແມ່ນການກະສິກຳ;
3. ມີສະຖານທີ່ ຫຼື ບ່ອນຮຽນຮູ້ດ້ານເຕັກນິກ ກະສິກຳ ແລະ ປ່າໄມ້ ເພື່ອແລກປ່ຽນປະສົບການ ແລະ ຂໍ້ມູນຂ່າວສານ;
4. ມີກຸ່ມການຜະລິດກະສິກຳສະອາດ ແບບປະສົມປະສານ ແລະ ມີແບບແຜນການອະນຸລັກຮັກສາ ສະພາບແວດລ້ອມໃນລະດັບບ້ານ ທີ່ດີ;
5. ການລ້ຽງສັດຕ້ອງມີຟາມ ຫຼືຄອກ, ມີບ່ອນປູກຫຍ້າອາຫານສັດ, ສັດລ້ຽງໄດ້ຮັບການສັກຢາກັນພະຍາດທີ່ຖືກຕ້ອງຕາມຫຼັກວິຊາການ; ຟາມລ້ຽງສັດທຸກປະເພດ ຕ້ອງຮັບປະກັນບໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ;
6. ມີແຜນການປົກປັກຮັກສາແຫຼ່ງນ້ຳ, ວັງສະຫງວນສັດນ້ຳ, ປົກປັກຮັກສາປ່າໄມ້ ແລະ ປູກໄມ້ປ້ອງກັນ, ສະກັດກັ້ນໄຟໄໝ້ລາມປ່າ ແລະ ມີການຈັດຕັ້ງປະຕິບັດ, ຕິດຕາມກວດກາຢ່າງເປັນຂະບວນ ແລະ ຕໍ່ເນື່ອງ;
7. ເປັນບ້ານທີ່ເຂົ້າຮ່ວມໃນກຸ່ມການຜະລິດກະສິກຳ ແລະ ປ່າໄມ້, ຫຼື ກຸ່ມພັດທະນາອື່ນໆ ທີ່ອົງການປົກຄອງທ້ອງຖິ່ນສ້າງຕັ້ງຂຶ້ນ ຢ່າງຕັ້ງໜ້າ;
8. ມີວິຊາການປະຈຳຂັ້ນບ້ານ ທີ່ໄດ້ຮັບການຝຶກອົບຮົມວິຊາຊີບດ້ານກະສິກຳ ແລະ ປ່າໄມ້ (ໝໍດິນ, ຊົນລະປະທານ, ປູກຝັງ, ສັດຕະວະແພດ ແລະ ປ່າໄມ້) ຢ່າງໜ້ອຍ 3-5 ຄົນ;
9. ມີສະມາຊິກພາຍໃນບ້ານທີ່ມີອາຊີບເຮັດການຜະລິດກະສິກຳ ແລະ ປ່າໄມ້ ໄດ້ຮັບການຢັ້ງຢືນເປັນຄອບຄົວຕົວແບບທາງດ້ານການຜະລິດກະສິກຳ ແລະ ປ່າໄມ້ ຢ່າງໜ້ອຍ 80% ຂຶ້ນໄປ;

10. ປະຊາຊົນພາຍໃນບ້ານສາມາດເຂົ້າເຖິງ ບ່ອນແລກປ່ຽນຊື້ຂາຍຜະລິດຕະພັນສິນຄ້າກະສິກຳ ແລະ ປ່າໄມ້, ເທດສະການວາງສະແດງສິນຄ້າ ກະສິກຳ ແລະ ປ່າໄມ້ ທີ່ສະດວກ.

**ມາດຕາ 4 ເມືອງ ກະສິກຳ ແລະ ປ່າໄມ້ ພັດທະນາ**

ເມືອງ ກະສິກຳ ແລະ ປ່າໄມ້ ພັດທະນາ ຕ້ອງບັນລຸມາດຕະຖານ ດັ່ງນີ້:

1. ແມ່ນເມືອງທີ່ໄດ້ຮັບການຢັ້ງຢືນການສ້າງແຜນກວມລວມໃນການພັດທະນາເມືອງຮອບດ້ານ, ມີລະບຽບການຄຸ້ມຄອງ ແລະ ນຳໃຊ້ແຜນກວມລວມພັດທະນາເມືອງ ທີ່ໄດ້ຮັບການເຜີຍແຜ່ແນະນຳຢ່າງທົ່ວເຖິງ ແລະ ຈັດຕັ້ງປະຕິບັດແຜນດັ່ງກ່າວຢ່າງເຂັ້ມງວດ;
2. ມີສະຖານທີ່ ຫຼື ສູນບໍລິການເຕັກນິກ ກະສິກຳ ແລະ ປ່າໄມ້ ເພື່ອສະໜອງຂໍ້ມູນຂ່າວສານ ທາງດ້ານການປູກ-ການລ້ຽງ, ເຮັດການສາທິດທົດລອງ, ມີພະນັກງານວິຊາການປະຈຳ ສາມາດຝຶກອົບຮົມວິຊາຊີບດ້ານກະສິກຳ ແລະ ປ່າໄມ້ ໃຫ້ຂັ້ນບ້ານ ເພື່ອສ້າງໃຫ້ໄດ້ວິຊາການກັບທີ່ຂັ້ນບ້ານ (ໝໍດິນ, ຊົນລະປະທານ, ປູກຝັງ, ສັດຕະວະແພດ ແລະ ປ່າໄມ້) ຢ່າງໜ້ອຍ 3-5 ຄົນຕໍ່ນຶ່ງບ້ານ;
3. ເປັນເມືອງ ທີ່ເຂົ້າຮ່ວມໃນກຸ່ມການຜະລິດກະສິກຳ ແລະ ປ່າໄມ້, ຫຼື ກຸ່ມພັດທະນາອື່ນໆ ທີ່ອົງການປົກຄອງທ້ອງຖິ່ນສ້າງຕັ້ງຂຶ້ນ ຢ່າງຕັ້ງໜ້າ;
4. ມີກຸ່ມການຜະລິດກະສິກຳສະອາດ ແບບປະສົມປະສານ ແລະ ມີແບບແຜນການອະນຸລັກ ຮັກສາສະພາບແວດລ້ອມຂັ້ນເມືອງ ທີ່ດີ;
5. ມີສະຖານທີ່ ຫຼື ສູນບໍລິການປຸງແຕ່ງຜະລິດຕະພັນກະສິກຳ ແລະ ປ່າໄມ້ ທີ່ໄດ້ມາດຕະຖານ, ເປັນເມືອງທີ່ສ້າງໄດ້ ໜຶ່ງ ຫຼື ຫຼາຍຜະລິດຕະພັນ (ODOP) ສາມາດຢັ້ງຢືນເປັນຜະລິດຕະພັນທີ່ເປັນເອກະລັກຂອງເມືອງໄດ້;
6. ມີບ້ານທີ່ໄດ້ຮັບການຢັ້ງຢືນເປັນບ້ານແບບຢ່າງທາງດ້ານ ກະສິກຳ ແລະ ປ່າໄມ້ ກວມ 80% ຂຶ້ນໄປ.
7. ມີຕະຫຼາດຈຳໜ່າຍ ແລະ ແລກປ່ຽນສິນຄ້າກະສິກຳ ທີ່ໄດ້ມາດຕະຖານຕາມກະຊວງອຸດສະຫະກຳ ແລະ ການຄ້າວາງອອກ.

**ມາດຕາ 5 ການປະເມີນ**

ການປະເມີນຄອບຄົວກະສິກຳຕົວແບບ ແລະ ບ້ານແບບຢ່າງດ້ານກະສິກຳ ແລະ ປ່າໄມ້ ແມ່ນຫ້ອງກະສິກຳ ແລະ ປ່າໄມ້ເມືອງ ເປັນຜູ້ດຳເນີນການ ແລະ ນຳສະເໜີໃຫ້ທ່ານເຈົ້າເມືອງເປັນຜູ້ຢັ້ງຢືນຮັບຮອງເອົາ, ສຳລັບເມືອງກະສິກຳພັດທະນາ ແມ່ນພະແນກກະສິກຳ ແລະ ປ່າໄມ້ແຂວງ ເປັນຜູ້ດຳເນີນການ ແລ້ວສະເໜີໃຫ້ ເຈົ້າແຂວງຮັບຮອງເອົາ ໂດຍອີງໃສ່ມາດຕະຖານທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 6 ການຢັ້ງຢືນ ແລະ ການຮັບຮອງ**

1. ການຢັ້ງຢືນ ແລະ ການຮັບຮອງ ຄອບຄົວກະສິກຳຕົວແບບ ແມ່ນນາຍບ້ານເປັນຜູ້ສະເໜີຕໍ່ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເພື່ອພິຈາລະນາອອກໃບຢັ້ງຢືນ ແລະ ຮັບຮອງ ໂດຍຜ່ານການຢັ້ງຢືນຈາກຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.
2. ການຢັ້ງຢືນ ບ້ານແບບຢ່າງດ້ານກະສິກຳ ແລະ ປ່າໄມ້ ແມ່ນເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນເປັນຜູ້ສະເໜີຕໍ່ເຈົ້າແຂວງ ເພື່ອພິຈາລະນາອອກໃບຢັ້ງຢືນ ແລະ ຮັບຮອງ ໂດຍຜ່ານການຢັ້ງຢືນຈາກພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ນະຄອນຫຼວງ
3. ການຢັ້ງຢືນ ແລະ ການຮັບຮອງ ເມືອງກະສິກຳພັດທະນາ ແມ່ນເຈົ້າແຂວງ-ເຈົ້ານະຄອນ ເປັນຜູ້ສະເໜີຕໍ່ລັດຖະບານ ເພື່ອພິຈາລະນາອອກໃບຢັ້ງຢືນ ແລະ ຮັບຮອງ ໂດຍຜ່ານການຢັ້ງຢືນຈາກກະຊວງກະສິກຳ ແລະ ປ່າໄມ້.

**ມາດຕາ 7 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມສົ່ງເສີມເຕັກນິກ ແລະ ປຸງແຕ່ງກະສິກຳ ປະສານສົມທົບກັບກົມວິຊາການກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ເຜີຍແຜ່ແນະນຳ ພ້ອມທັງຊຸກຍູ້ປະຕິບັດ, ມີການເຮັດທົດລອງ ເພື່ອສະຫຼຸບເປັນບົດຮຽນຂະຫຍາຍອອກສູ່ທາງກ້ວາງ, ມີການຕິດຕາມກວດກາ ແລະ ປະເມີນຜົນ ເປັນແຕ່ໄລຍະຢ່າງຕໍ່ເນື່ອງ ຫາກເຫັນວ່າຈຸດໃດຍັງບໍ່ທັນສອດຄ່ອງເໝາະສົມກໍ່ໃຫ້ສະເໜີລາຍງານ ໄປຍັງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເພື່ອປັບປຸງແກ້ໄຂທັນເວລາ.

**ມາດຕາ 8** ຫ້ອງການ, ບັນດາກົມ, ສະຖາບັນ, ຫົວໜ່ວຍວິຊາການຂັ້ນສອງ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ບັນດາສູນຕ່າງໆຈົ່ງຮັບຮູ້,ໃຫ້ການສະໜັບສະໜູນ ແລະ ປະຕິບັດຕາມໜ້າທີ່ ແລະ ຄວາມຮັບຜິດຊອບຂອງໃຜລາວຢ່າງເຂັ້ມງວດ.

**ມາດຕາ 9** ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງສະບັບເລກທີ 1380/ກປ, ສະບັບລົງວັນທີ 13 ກໍລະກົດ 2013, ສຳລັບບ້ານກະສິກຳ ພັດທະນາ ທີ່ໄດ້ປະກາດໄປແລ້ວ ໃຫ້ສືບຕໍ່ຮັກສາຕົວເລກດັ່ງກ່າວໄວ້ ແຕ່ວ່າ, ອົງການປົກຄອງແຂວງ, ເມືອງ, ບ້ານຕ້ອງກວດກາຄືນ ຖ້າຫາກຕົວຊີ້ບອກໃດບໍ່ບັນລຸຕາມມາດຕະຖານ ທີ່ໄດ້ກຳນົດຢູ່ໃນຂໍ້ຕົກລົງສະບັບນີ້ ຕ້ອງສືບຕໍ່ສ້າງ ແລະ ປັບປຸງໃຫ້ໄດ້ຄົບມາດຕະຖານ; ສ່ວນການກວດກາປະເມີນຜົນ ຄອບຄົວກະສິກຳຕົວແບບ, ບ້ານແບບຢ່າງດ້ານກະສິກຳ ແລະ ປ່າໄມ້, ເມືອງກະສິກຳພັດທະນາ ທີ່ຢູ່ນອກຈຳນວນທີ່ໄດ້ກວດກາປະເມີນກ່ອນໜ້ານີ້ແລ້ວນັ້ນ ຕ້ອງອີງໃສ່ມາດຕະຖານ, ຕົວຊີ້ບອກຕາມຂໍ້ຕົກລົງສະບັບນີ້ ເພື່ອສ້າງ ແລະ ປະເມີນຜົນ; ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້**

ປອ.ລຽນ ທິແກ້ວ

ບ່ອນນຳສົ່ງ:

- ທ່ານ ລມຕ, ຮລມຕ 05 ສະບັບ
- ຫ້ອງການ, ກົມ, ສະຖາບັນ 14 ສະບັບ
- ພະແນກເລຂາ 01 ສະບັບ
- ພະແນກຄົ້ນຄ້ວາ ແລະ ສັງລວມ 01 ສະບັບ
- ເກັບມ້ຽນ 01 ສະບັບ